ຄວາມຮູ້ພູມປັນຍາທ້ອງຖິ່ນ

# ປູກໝາກມີ້

(ສະບັບທົດລອງ)



ຂຽນໂດຍ: ອ.ຈ ຄໍາມ່ວນ ໄຊຍະແສງ

ຂໍ້ມູນຈາກ: ບ້ານພູເມືອງ ເມືອງຄໍາ ແຂວງ ຊຽງຂວາງ

ປີ 2007

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ປູກໝາກມີ້

ຮີບໂຮມ ແລະຈັດໜ້າໂດຍ: ນາງ ນ່າ ຄຳເຮືອງ
ຮຽບຮຽງໂດຍ:
ແຕ້ມໂດຍ: ທ້າວ ຄຳຫຼ້າ ພອນມະນີວົງ
ເຈົ້າຂອງ: ສຶກສາເມືອງ ຄຳ ແຂວງ ຊຽງຂວາງ

Pestalozzi Children's Foundation
A world for Children

PDF created with pdfFactory Pro trial version www.pdffactory.com

## ຄຳນຳ

ປື້ມຄວາມຮູ້ພູມປັນຍາທ້ອ້ງຖິ່ນເຫຼັ້ມນີ້ໄດ້ບັນຈຸເອົາເນື້ອໃນ,ຂັ້ນຕອນການປະຕິບັດຕ່າງໆລວມທັງຄຸນປະໂຫຍດຂອງການປູກໝາກໝີ້ທ້ອງຖິ່ນບ້ານພູເມືອງ ເມືອງຄຳ ແຂວງຊຽງຂວາງ ໂດຍແມ່ນຄູເຝິກຊຸມຊົນເປັນຜູ້ໃຫ້ຂໍ້ມູນ ແລະຂຽນດ້ວຍຕົນເອງໂດຍຜ່ານການຮັບຮອງ ແລະຮຽບຮຽງຈາກຫ້ອງການສຶກສາປະຈຳເມືອງ, ພະແນກສຶກສາປະຈຳແຂວງ, ສູນອົບຮົມຮ່ວມພັດທະນາ, ກົມພາລະ ແລະສິລະປະສຶກສາ (ກະຊວງສຶກສາທິການ).

ປື້ມເຫຼັ້ມນີ້ຄະນະຈັດທຳມີຈຸດປະສົງແນະນຳ ແລະຈັດທຳຂຶ້ນເພື່ອເປັນຄູ່ມື ແລະເປັນບ່ອນອີງໃຫ້ແກ່ຄູອາຈານໃນການສິດສອນວິຊາພູມປັນຍາທ້ອງຖິ່ນ, ດັ່ງນັ້ນຄູຕ້ອງເລືອກຫົວຂໍ້ທີ່ເໝາະສົມກັບໄວອາຍຸຂອງເດັກໃນແຕ່ລະຂັ້ນຮຽນໂດຍອີງຕາມສະມັດຕະພາບຂອງບົດສອນເຊິ່ງໄດ້ລະບຸໄວ້ໃນແຜນການສອນປະຈຳປີ, ປະຈຳເດືອນ ແລະປະຈຳອາທິດ, ເຖິງຢ່າງໃດກໍຕາມຄູຕ້ອງໄດ້ເອົາໃສ່ຕື່ມໃນການເອົາຄວາມຮູ້ທ້ອງຖິ່ນເຂົ້າມາສິດສອນເພື່ອເຮັດໃຫ້ເນື້ອໃນຂອງຂະບວນການຮຽນຮູ້ຂອງເດັກນ້ອຍມີຄວາມສົມບູນ ແລະມີຄວາມສອດຄ່ອງກັບຄວາມເປັນຈິງຫຼາຍຂຶ້ນ.

ຄະນະຈັດທຳປື້ມຄວາມຮູ້ພູມປັນຍາທ້ອງຖິ່ນເຫຼັ້ມນີ້ຄິດວ່າເນື້ອໃນຍັງມີຫຼາຍອັນທີ່ຍັງບໍ່ທັນສົມບູນ, ຄົບຖ້ວນ ແລະຂາດຫາຍໄປພວກເຮົາຫວັງຢ່າງຍິ່ງວ່າຄົງຈະໄດ້ຮັບຄຳຕຳນິຕິຊົມຈາກຄູ - ອາຈານຜູ້ທີ່ຊົມໃຊ້ທຸກທ່ານພວກເຮົາພ້ອມແລ້ວທີ່ຈະປັບປຸງປື້ມຄວາມຮູ້ພູມປັນຍາທ້ອງຖິ່ນເຫຼັ້ມນີ້ໃຫ້ສົມບູນຂຶ້ນ ;ແລະຂໍຂອບໃຈລ່ວງໜ້າກ່ຽວກັບຄຳຕຳນິຕິຊົມຂອງທ່ານທີ່ມີຕໍ່ພວກເຮົາ.

ຄະນະຈັດທຳ

## ຮູບ ແລະປະຫວັດຂອງຜູ້ຂຽນ

ຊື່.ອ.ຈ ຄຳມ່ວນ ນາມສະກຸນ. ໄຊຍະແສງ

ອາຍຸ. 57 ປີ . ອາຊີບ. ເຮັດນາ

## ເຫດຜົນຂອງການຂຽນບົດນີ້:

ຈຸດປະສົງເພື່ອເລັ່ງໃສ່ເຮັດໃຫ້ແນວຄິດຈິດໃຈຂອງຄົນຮຸ່ນຫຼັງໃຫ້ມີແນວຄິດຕໍ່ການປູກຝັງເພື່ອກຸ້ມຕົນເອງ ແລະຄອບຄົວຖ້າຫາກເຮັດໄດ້ຫຼາຍກໍຂາຍເປັນສິນຄ້າຂອງຄອບຄົວໄດ້ອີກດ້ານໜຶ່ງເຮັດໃຫ້ຄົນຮຸ່ນນ້ອຍມີແນວຄິດຮູ້ຮັກການອອກແຮງງານ

PDF created with pdfFactory Pro trial version www.pdffactory.com

**ບົດເລກ**

ທ້າວເຕ່ງຂຸດຂຸມປູກໝາກມີ້ຢູ່ທີ່ສວນຂອງລາວ ມື້ທີໜຶ່ງລາວຂຸດໄດ້ 18 ຂຸມ, ມື້ທີສອງຂຸດໄດ້ 15 ຂຸມ ແລະມື້ທີສາມຂຸດໄດ້ 10 ຂຸມ ຖາມວ່າທັງສາມມື້ທ້າວ ເຕ່ງຂຸດຂຸມປູກໝາກມີ້ໄດ້ທັງໝົດຈັກຂຸມ ?

ຕອບ: - ມື້ທີໜຶ່ງຂຸດໄດ້ 18 ຂຸມ
- ມື້ທີສອງຂຸດໄດ້ 15 ຂຸມ
- ມື້ທີສາມຂຸດໄດ້ 10 ຂຸມ

18 ຂຸມ + 15 ຂຸມ + 10 ຂຸມ = 43 ຂຸມ

## ຄວາມເປັນມາຂອງການປູກໝາກມີ້

ໝາກມີ້ເປັນຕົ້ນໄມ້ກິນໝາກຍາວນານຊະນິດໜຶ່ງທີ່ຄົນເຮົາມັກນິຍົມກັນກິນ ແລະສູ່ຕ້ອນກັນເປັນຂອງຝາກຕາມທ້ອງຖິ່ນ. ດັ່ງນັ້ນທຸກຄອບຄົວຈຶ່ງໄດ້ປູກເອົາໄວ້ຢູ່ແຄມບ້ານ ແລະຕາມສວນ.

## ຮູບຮ່າງລັກສະນະຂອງຕົ້ນໝາກມີ້

ຕົ້ນໝາກມີ້ເປັນຕົ້ນໄມ້ໃຫຍ່ ແລະສູງພໍສົມຄວນ ສູງສຸດປະມານ 10 ແມັດ, ເປັນຕົ້ນໄມ້ທີ່ມີຢາງໜຽວ, ສີຂອງລຳຕົ້ນເປັນສີເທົາ, ໃບເປັນສີຂຽວ ແລະບໍ່ໃຫຍ່ຫຼາຍ, ໝາກຂອງມັນອອກຕາມຫງ່າ ແລະລຳຕົ້ນ.

## ຮູບຮ່າງລັກສະນະຂອງໜ່ວຍໝາກມີ້

ໜ່ວຍໝາກມີ້ມີລັກສະນະໜ່ວຍໃຫຍ່ ແລະກົມ, ເປັນໝາກໄມ້ທີ່ມີຢາງໜຽວ, ເປືອກຂອງມັນຫຸ້ມຫໍ່ດ້ວຍໜາມນ້ອຍໆ, ທາງໃນມີບົວສີເຫຼືອງ ແລະມີໃຍນ້ອຍໆສະຫຼັບຫວ່າງຂອງແຕ່ລະບົວ, ເປັນໝາກໄມ້ທີ່ລົດຊາດຫວານ ແລະມີກິ່ນຫອມ.

## ບ່ອນປູກໝາກມີ້

ໝາກມີ້ເປັນຕົ້ນໄມ້ທີ່ໃຫຍ່ ແລະສູງ, ເຮົາສາມາດປູກລຽບຕາມແຄມຮົ້ວ ຫຼື ເດີ່ນບ້ານທີ່ມີເນື້ອທີ່ກ້ວາງ ຫຼື ອາດຈະປູກເປັນສວນກໍໄດ້.

## ການເລືອກເບ້ຍໄປປູກ

ການເລືອກເບ້ຍໄປປູກຕ້ອງເລືອກເອົາເບ້ຍທີ່ງາມ ແລະ

PDF created with pdfFactory Pro trial version www.pdffactory.com

ແຂງແຮງດີ, ເບ້ຍທີ່ເຮົາຈະເອົາໄປປູກຕ້ອງມີອາຍຸປະມານ 25 – 30 ວັນຈິ່ງສາມາເອົາໄປປູກໄດ້.

**<u>ອຸປະກອນ</u>**

ແນວພັນ



ສະຖານທີ່



ຊວ້ານ



ຈົກ



**ຂັບໄທດຳ: ການປູກໝາກມີ້**

- ຮ່າໂອຍ…ເຮົາຈິ່ຈາຄວາມເສືອງ ຕໍ່ຊຸມຫຼານຈູ່ກິນກ່ອນ ເນີ……

ມີ້ແຕ່ກີ້ກ່ອນເຈົ້າ ເມືອງລາວເປັນເສິກ

ເສືອຊຸ່ນມົວຍ່າວຫຍຸ້ງແຕ້ດໍ້

ເຮົາຍັງໄດ້ແຕະພຸ້ງ ໄປຢູ່ກົ້ນເຟືອງຊຸມເຮີຍ…

- ຮ່າໂອຍ…ບາດເຈີມາໄຕນີ້ ເມືອງລາວເຮົາຢູ່ອຽນ

ຮ່ຳຮຽນເມືອໜ້າ

ຍັງມາເຈື່ອກັນເຍື້ອນ ສືບສ້າງຕໍ່ໄປແຕ້ເນີ…

- ເຮົາມາປ່າກັນສ້າງ ເອັດໄຮ່ນາສວນ

ໃຫ້ມັນເປັນຂະບວນ ເອັດສວນໝາກມີ້ແຕ້ເນີ…

- ໃຫ້ມັນມີຫຼາງລົ້ນ ເປັນຕົ້ນກ່າງກັນ

ປຸຝາງກັນເປັນຖັນແຖວ ເອັດມູນເມື່ອໜ້າຊູມ ເອີ້ຍ……

ແປສັບ: ຫຼາງ ແປວ່າ ຫຼາຍ

ປຸຝາງ ແປວ່າ ປູກຝັງ

PDF created with pdfFactory Pro trial version www.pdffactory.com

### ເຊີ້ງ: ມາປູກໝາກມີ້

ໂຮ.......................ຮິວ

| | |
|---|---|
| ມາພວກເຮົາມາ | ທຸກຄົນພໍ່ແມ່ |
| ພ້ອມທັງເຖົ້າແກ່ | ລູກຫຼານທັງຫຼາຍ |
| ມີຈຸດມຸ່ງໝາຍ | ເບິ່ງຕົ້ນໝາກມີ້ |
| ມັນເປັນຈັ່ງຊີ້ | ຍ້ອນເຮົາດຸໝັ່ນ |
| ຖ້າເຮົາຂະຫຍັນ | ໝັ່ນພຽນກວ່ານີ້ |
| ຖ້າຂາຍໝາກມີ້ | ແຮ່ງໄດ້ເງິນຫຼາຍ |
| ການໃຊ້ການຈ່າຍ | ບໍ່ອຶດບໍ່ຢາກ |
| ເຮົາບໍ່ທຸກຍາກ | ຍ້ອນຂາຍໝາກມີ້ |

### ເພງ: ພູເມືອງແຫ່ງນີ້

| | |
|---|---|
| ພູເມືອງແຫ່ງນີ້ | ເບິ່ງແລ້ວຈັບໃຈ |
| ຊ່າງງາມວິໄລ | ແນມໄປເຫັນສວນໝາກມີ້ |
| ຊ່າງງາມເຫຼືອ | ໝາກມີ້ເປັນຕົ້ນສຳຄັນ (*2) |
| ເຮົາມາພາກັນ | ເຮັດສວນໝາກມີ້ |

ຄຸ



ບວຍຕັກນ້ຳ



ຝຸ່ນ



## ການກຽມໝານກ້າ

ເຮົາກຽມດິນໃຫ້ເປັນໝານລັກສະນະຄືໝານຜັກ.ໃສ່ຝຸ່ນ ຈຶ່ງເອົາແນວໝາກມີ້ລົງກ້າໃສ່ດິນ. ກ້າເປັນແຖວໄລຍະຫ່າງກັນ 15-20 ຊັງຕີແມັດ ແລ້ວໝັ່ນຫົດນ້ຳ.ໄດ້ປະມານ 10-15 ວັນ ແກ່ນໝາກມີ້ກໍຈະແຕກຈາວອອກປະມານ 2 - 3 ຊັງຕີແມັດ.

ຫຼັງຈາກເຮົາກ້າໄດ້ 25 - 30 ວັນກໍຈະຍ້າຍເອົາເບ້ຍໝາກມີ້ທີ່ເຮົາກ້າໄວ້ນັ້ນໄປປູກໄດ້.

PDF created with pdfFactory Pro trial version www.pdffactory.com

## ການກຽມດິນປູກໝາກມີ້

ດິນຕ້ອງເປັນລັກສະນະດິນດຳນໍ້າຊຸ່ມ ແລະຮາບພຽງພໍສົມຄວນ ບໍ່ຕ້ອງເອົາດິນພູເຮັດສວນໝາກມີ້.

## ວິທີ ແລະຂັ້ນຕອນການປູກ

- ກ່ອນອື່ນໝົດເຮົາເອົາຊວ້ານ ຫຼືສຽມຂຸດຂຸມບ່ອນທີ່ຈະປູກນັ້ນລົງປະມານ 20 ຊັງຕີແມັດ, ກວ້າງ 20 ຊັງຕີແມັດ
- ຕັກຝຸ່ນລົງປະມານເຄິ່ງກິໂລ (500 ກຼາມ) ແລ້ວຫົດນໍ້າລົງ ແລະເອົາມີຄົນຝຸ່ນໃສ່ນໍ້າໃຫ້ປຽກພໍສົມຄວນ
- ເມື່ອເບ້ຍມັນສູງປະມານ 20 - 30 ຊັງຕີແມັດແລ້ວເອົາເບ້ຍໝາກມີ້ລົງປູກ ແລ້ວເອົາດິນຖົມລົງໃຫ້ພຽງ ແລະເອົາໄມ້ຕຳໃຫ້ແໜ້ນດີ. ໄລຍະປູກຫ່າງກັນ 4 – 5 ແມັດ ຕໍ່ໆໄປ ( ຂຸມໜຶ່ງກວ້າງ 30 ຊັງຕີແມັດ, ເລິກ 30 ຊັງຕີແມັດ )

## ການບົວລະບັດຮັກສາ

- ພາຍຫຼັງເຮົາປູກແລ້ວໃນ 1 ອາທິດຕ້ອງຫົດນໍ້າມື້ລະ 1 ຄັ້ງຈົນກວ່າເບ້ຍໄມ້ນັ້ນຄືນ ຫຼື ຕິດດີ.
- ເສຍຫຍ້າ, ຄຸນດິນ, ໃສ່ຝຸ່ນເປັນປົກກະຕິຈົນກວ່າຕົ້ນມີ້ໃຫຍ່
- ເມື່ອຕົ້ນມີ້ໃຫຍ່ຕ້ອງຖາງປ່າເສຍຫຍ້າເພື່ອບໍ່ໃຫ້ມັນຮົກ

## ຄຸນປະໂຫຍດການປູກໝາກມີ້:

- ການປູກໝາກມີ້ມີຄຸນປະໂຫຍດໃຫ້ແກ່ຮ່າງກາຍຂອງຄົນເຮົາຫຼາຍ, ຍ້ອນເຮົາມີໝາກມີ້ກິນຕະຫຼອດຫຼາຍຊົ່ວຄົນຮອດຊົ່ວລູກຊົ່ວຫຼານ ຫຼືຖ້າເຮົາປູກຫຼາຍກໍນຳໄປຂາຍເພື່ອສ້າງລາຍຮັບໃຫ້ແກ່ຄອບຄົວເຮົາອີກດ້ວຍ.

## ການກິນໝາກມີ້ຢ່າງຖືກວິທີ

ການກິນໝາກມີ້ທຸກຄັ້ງຕ້ອງເອົາຢາງຂອງມັນອອກໃຫ້ໝົດກ່ອນເພາະຈະເຮັດໃຫ້ມັນຕິດມື ແລະຕິດເຄື່ອງນຸ່ງເຮົາ ແລະສິ່ງສຳຄັນຕ້ອງອານາໄມອຸປະກອນການໃຊ້ປາດໝາກມີ້ທຸກຄັ້ງ.

**ກາບ: ໝາກມີ້ບ້ານເຮົາ**

| | |
|---|---|
| ສວນໝາກມີ້ | ບ້ານເຮົາງາມຫຼາຍ |
| ປູກຢັ່ງຢາຍ | ເບິ່ງສຸດສາຍຕາ |
| ພໍແລ້ວນາ | ເຮົາພາກັນປູກ |
| ສອນພວກລູກ | ໃຫ້ຮຽນຮູ້ໄວ້ |
| ເພື່ອຈະໄດ້ | ນຳໄປສືບຕໍ່ |
| ຢ່າໄດ້ທໍ້ | ນຳການເຮັດສວນ |
| ເປັນຂະບວນ | ນ້ອຍໜຸ່ມຍິງຊາຍ |
| ປູກໃຫ້ຫຼາຍ | ກາຍເປັນສິນຄ້າ |

PDF created with pdfFactory Pro trial version www.pdffactory.com